Washington State
Health Care Authority

# ວິທີການດຳເນີນການຮ້ອງທຸກເຣື່ອງການແບ່ງແຍກຊົນຊັ້ນວັນນະ

ພະແນກ Washington State Health Care Authority (HCA) ໄດ້ກໍ່ຕັ້ງວິທີການດຳເນີນການຮ້ອງທຸກເຣື່ອງການແບ່ງແຍກຊົນຊັ້ນວັນນະຕໍ່ລົງໄປນີ້ຕາມທີ່ຖືກບົ່ງໄວ້ໂດຍກົດໝາຍ Americans with Disabilities Act of 1990 (ADA) ແລະ ກົດໝາຍທີ່ກ່ຽວຂ້ອງນຳສິດທິພົລເມືອງອື່ນໆລວມທັງ Section 1557 ຂອງກົດໝາຍ Affordable Care Act. ຖ້າຫາກວ່າທ່ານປະສົງຢາກຈະຍື່ນຄຳຮ້ອງທຸກກ່າວຫາການແບ່ງແຍກຊົນຊັ້ນວັນນະໂດຍພະແນກ HCA ອີງໃສ່ພື້ນຖານຂອງຜິວພັນ, ສີສັນ, ທີ່ມາຂອງຊົນຊາດ, ເພດ, ຄວາມອຸ່ນອ່ຽງທາງເພດ, ເພດ, ການສະແດງອອກມາທາງເພດ ຫລື ເອກະລັກບຸກຄົນ, ລັດທິ, ສະພາບແຕ່ງງານ, ສາສະນາ, ນັກຮົບເກົ່າຜູ້ທີ່ຖືກປົດອອກຈາກໜ້າທີ່ຢ່າງມີກຽດ ຫລື ສະພາບທະຫານ, ອາຍຸ, ຄວາມເສັຽອົງຄະ ຫລື ການໃຊ້ໝາຊີ້ນຳທາງທີ່ຖືກຝຶກຝົນມາ ຫລື ສັດລ້ຽງບໍຣິການໂດຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະ, ກະຣຸນາປະຕິບັດຕາມວິທີການດຳເນີນການທີ່ຖືກກ່າວຢູ່ຂ້າງລຸ່ມນີ້.

1. ເຮັດຄຳຮ້ອງທຸກຂອງທ່ານເປັນລາຍລັກອັກສອນ ແລະ ລວມເອົາຣາຍຣະອຽດກ່ຽວກັບການແບ່ງແຍກຊົນຊັ້ນວັນນະທີ່ຖືກກ່າວຫາ, ລວມທັງຊື່, ທີ່ຢູ່, ແລະ ເລກໂທຣະສັບຂອງຜູ້ຮ້ອງທຸກ, ແລະ ສະຖານທີ່, ວັນທີ, ແລະ ຄຳບັນຣະຍາຍຂອງບັນຫາ. ຫົນທາງເລືອກທາງອື່ນໆຂອງການຍື່ນຄຳຮ້ອງທຸກ, ເຊັ່ນວ່າການສຳພາດສ່ວນຕົວ ຫລື ການບັນທຶກອັດສຽງຂອງຜູ້ຮ້ອງທຸກ, ຈະຖືກເຮັດໃຫ້ມີໄວ້ໃຫ້ອີກຄືກັນສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະຕາມຄຳຮ້ອງຂໍ. ຈົ່ງໂທຫາ HCA ໄດ້ທີ່ເລກ 1-855-682-0787 ເພື່ອຈະທຳການຈັດຫາຫົນທາງເລືອກທາງອື່ນໆຂອງການຍື່ນຄຳຮ້ອງທຸກ. ບຸກຄົນຜູ້ທີ່ມີຄວາມເສັຽອົງຄະທາງການຟັງສຽງ ຫລື ການປາກເວົ້າກະຣຸນາໂທຫາເລກ 711 ສຳລັບການບໍຣິການຕໍ່ສາຍ.

2. ຍື່ນຄຳຮ້ອງທຸກໄປຫາພະນັກງານ HCA's ADA Compliance Officer ໂດຍບໍ່ກາຍເກີນ 90 ວັນຕາມປະຕິທິນຫລັງຈາກການລ່ວງລະເມີດທີ່ຖືກກ່າວຫາ.

   ADA Compliance Officer
   Washington State Health Care Authority
   P.O. Box 42704
   Olympia, WA 98504-2704

3. ພາຍໃນ 15 ວັນຕາມປະຕິທິນຂອງການໄດ້ຮັບຄຳຮ້ອງທຸກ, ພະນັກງານ HCA's ADA Compliance Officer ຈະໄປພົບກັບທ່ານໂດຍຕົນເອງ, ໂດຍທາງໂທຣະສັບ, ຫລື ໂດຍທາງເລືອກອື່ນໆເພື່ອຈະເວົ້າລົມເຣື່ອງການຮ້ອງທຸກນຳກັນ ແລະ ການແກ້ໄຂບັນຫາທີ່ອາດຈະເປັນໄປໄດ້. ພະນັກງານ HCA's ADA Compliance Officer ຈະຕອບກັບຄືນມາເປັນລາຍລັກອັກສອນພາຍໃນ 15 ວັນຕາມປະຕິທິນກ່ຽວກັບການປະຊຸມ ແລະ, ເມື່ອເປັນທີ່ເໝາະສົມ, ໃນແບບຮູບຮ່າງອື່ນທີ່ເຂົ້າເຖິງໄດ້ໂດຍທ່ານ, ເຊັ່ນວ່າຕົວພິມໃຫຍ່, ຕົວໜັງສືສຳລັບຄົນຕາບອດ, ຫລື ການບັນທຶກສຽງໄວ້. ຄຳຕອບຈະອະທິບາຍທ່າທີຂອງພະແນກ HCA ແລະ ທາງເລືອກສຳລັບການແກ້ໄຂຄຳຮ້ອງທຸກ.

4. ຖ້າຫາກວ່າຄຳຕອບຂອງພະນັກງານ HCA's ADA Compliance Officer ບໍ່ໄດ້ແກ້ໄຂບັນຫາ, ທ່ານຈະຍື່ນຄຳອຸທອນໄປຫາຜູ້ຈັດການຂອງ HCA's Enterprise Risk Manager ພາຍໃນ 15 ວັນຕາມປະຕິທິນຂອງການໄດ້ຮັບຄຳຕອບ. ຈະທຳການອຸທອນແນວໃດຈະຖືກອະທິບາຍຢູ່ໃນຄຳຕອບທີ່ທ່ານໄດ້ຮັບຈາກພະນັກງານ HCA's ADA Compliance Officer.

   ພາຍໃນ 15 ວັນຕາມປະຕິທິນຂອງການໄດ້ຮັບຄຳອຸທອນ, ຜູ້ຈັດການ HCA's Enterprise Risk Manager ຈະຈັດແຈງທີ່ຈະໄປພົບກັບທ່ານໂດຍຕົນເອງ, ໂດຍທາງໂທຣະສັບ, ຫລື ໂດຍຫົນທາງອື່ນໆເພື່ອຈະເວົ້າລົມກັນກ່ຽວກັບຄຳຮ້ອງທຸກ ແລະ ການແກ້ໄຂທີ່ອາດເປັນໄປໄດ້. ພາຍໃນ 15 ວັນຕາມປະຕິທິນຫລັງຈາກການປະຊຸມກັນແລ້ວຜູ້ຈັດການ HCA's Enterprise Risk Manager ຈະຕອບກັບຄືນມາພ້ອມດ້ວຍການແກ້ໄຂບັນຫາຄຳຮ້ອງທຸກຂັ້ນສຸດຂາດ.ຄຳຕອບຈະເປັນລາຍລັກອັກສອນແລະ, ເມື່ອເປັນທີ່ເໝາະສົມ, ໃນແບບຮູບຮ່າງອື່ນທີ່ເຂົ້າເຖິງໄດ້ໂດຍທ່ານ, ເຊັ່ນວ່າຕົວພິມໃຫຍ່, ຕົວໜັງສືສຳລັບຄົນຕາບອດ, ຫລື ການບັນທຶກສຽງໄວ້.

ຣາຍຣະອຽດອັນນີ້ຈະມີໄວ້ໃຫ້ຢູ່ໃນແວບໄຊທ໌ຂອງ HCA ພາຍໃຕ້ເຄືອຄ່າຍ "Nondiscrimination" ຢູ່ໜ້າປົກຂອງພວກເຮົາ:
www.hca.wa.gov